ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ສາລະວັນ

ພະແນກສຶກສາທິການ ແລະ ກິລາ

ເລກທີ.....50...... /ສກຂ.ສວ

ສາລະວັນ, ວັນທີ .....13-3-2026.......

# ໜັງສືປະກາດແຈ້ງການປະມູນ

**ເຖິງ :** ບັນດາບໍລິສັດຜູ້ຮັບເໝົາກໍ່ສ້າງ-ສ້ອມແປງເຄຫາສະຖານ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການປະກາດແຈ້ງການເຂົ້າຮ່ວມແຂ່ງຂັນປະມູນໂຄງການ ກໍ່ສ້າງ ອາຄານຮຽນ ແລະ ສະໜອງ ເຟີນິເຈີ ໂຮງຮຽນ ມັດທະຍົມສົມບູນ ເລົ່າມີໄຊ ເມືອງຄົງເຊໂດນ ແຂວງສາລະວັນ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14/12/2015.
- ອີງຕາມ ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15/12/2017.
- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ 30/ສພຊ, ລົງວັນທີ 2/11/2017.
- ອີງຕາມ ແຈ້ງການຂອງທ່ານລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເລື່ອງ ການຈັດຕັ້ງປະຕິບັດ ແຜນການລົງທຶນຂອງລັດ ປະຈຳປີ 2026 ແລະ ກະກຽມແຜນການລົງທຶນ ສຳລັບປີ 2027 ຂອງກະຊວງສຶກສາທິການ ແລະ ກິລາ, ສະບັບເລກທີ 112/ສສກ, ລົງວັນທີ 13/2/2026.

ພະແນກສຶກສາທິການແລະກິລາແຂວງສາລະວັນ, ຂໍປະກາດແຈ້ງການເຖິງ ບັນດາບໍລິສັດຜູ້ຮັບເໝົາກໍ່ສ້າງ-ສ້ອມແປງເຄຫາສະຖານ ໃນຂອບເຂດທົ່ວປະເທດ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນແບບເປີດກວ້າງ ໃນວຽກໂຄງການກໍ່ສ້າງ ອາຄານຮຽນ ແລະ ສະໜອງເຟີນິເຈີ ໂຮງຮຽນ ມັດທະຍົມສົມບູນ ເລົ່າມີໄຊ ເມືອງຄົງເຊໂດນ ແຂວງສາລະວັນ, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. **ແຫຼ່ງທຶນ: ແຜນການລົງທຶນຂອງລັດ ປະຈຳປີ 2026 ຂອງກະຊວງສຶກສາທິການແລະກິລາ**
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍ: ການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ຈັດຊື້ - ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ແມ່ນໃຫ້ທຸກໆບໍລິສັດທີ່ສະເໜີຍື່ນຊອງປະມູນ ຕ້ອງແຈ້ງທຶນຕົນເອງ ຢ່າງໜ້ອຍ 30% ຂອງມູນຄ່າສະເໜີ ແລະ ມີໃບອະນຸຍາດດຳເນີນທຸລະກິດ ທີ່ຖືກຕ້ອງຕາມກົດໝາຍ ໂດຍກ່ຽວພັນກັບວຽກທີ່ຈະດຳເນີນການກໍ່ສ້າງ (ປະຕັງຊັ້ນ 1 ) ຢູ່ໃນຂອບເຂດທົ່ວປະເທດ.
4. ບໍລິສັດໃດທີ່ມີຄວາມສົນໃຈສາມາດຊື້ເອກະສານປະມູນໄດ້ທີ່ພະແນກສຶກສາທິການແລະກິລາແຂວງສາລະວັນ(ໜ່ວຍງານກໍ່ສ້າງພື້ນຖານ), ນັບແຕ່ວັນທີ **13 ມີນາ 2026 ຫາ ວັນທີ 23 ເມສາ 2026.**

5. ເອກະສານປະມູນມີອາຍຸ 90 ວັນ ຫຼັງການເປີດຊອງປະມູນ, ຕ້ອງມີໃບຄໍ້າປະກັນປະມູນຢັ້ງຢືນຈາກທະນາຄານ 2% ຂອງມູນຄ່າປະມູນ, ຕາມຈໍານວນທີ່ລະບຸໄວ້ໃນເອກະສານຢ່າງຄົບຖ້ວນ.
6. ການລົງກວດກາສະໜາມຈະຖືກຈັດຂຶ້ນໂດຍ ພະແນກສຶກສາທິການແລະກິລາແຂວງສາລະວັນ ໃນວັນທີ **10 ເມສາ 2026** ບໍລິສັດ ທີ່ຈະເຂົ້າຮ່ວມປະມູນໂຄງການ ຈໍາເປັນຕ້ອງເຂົ້າຮ່ວມການກວດກາສະໜາມ ເພື່ອຮັບຮູ້ ສະພາບ, ເງື່ອນໄຂ ແລະ ຄວາມຕ້ອງການຂອງວຽກຢູ່ສະໜາມ.
7. ຊອງປະມູນພ້ອມເອກະສານຢັ້ງຢືນອື່ນໆ ຕ້ອງສົ່ງເຖິງ ພະແນກສຶກສາທິການ ແລະ ກິລາ ແຂວງສາລະວັນ (ຄະນະກໍາມະການປະມູນ) ກ່ອນເປີດຊອງປະມູນໃນເວລາ 10 : 00 ໂມງ ຂອງວັນທີ **23 ເມສາ 2026**, ທຸກຊອງປະມູນຈະຖືກເປີດຊ່ອງໜ້າຄະນະກໍາມະການປະມູນ ແລະ ບັນດາບໍລິສັດ ທີ່ເຂົ້າຮ່ວມ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງລັດວິສາຫະກິດແລະບັນດາບໍລິສັດຜູ້ຮັບເໝົາກໍ່ສ້າງ-ສ້ອມແປງເຄຫາສະຖານໃນຂອບເຂດທົ່ວປະເທດເພື່ອຮັບຊາບໃນການປະມູນໂຄງການດັ່ງກ່າວຕາມເນື້ອໃນ ແລະ ເງື່ອນໄຂດັ່ງຂ້າງເທິງນີ້ດ້ວຍ.

ຫົວໜ້າພະແນກສຶກສາທິການແລະກິລາແຂວງ

ປະທານການປະມູນ

ກະຊວງສຶກສາທິການ ແລະ ກິລາ
ພະແນກ ສຶກສາທິການ ແລະ ກິລາ
ແຂວງສາລະວັນ

ສຸປີ ນາມມະປັວລີ